# ງານວິໄຈເລື່ອງ: ການປະເມີນຜົນການບໍລິຫານການຝຶກອົບຮົມເພື່ອພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງໃນກຳແພງນະຄອນວຽງຈັນ

ໂດຍ: ທ່ານ ໂພສີ ທິບດາວັນ *

## ພາກທີ່ 1

**I. ພາກສະເໜີ**

ນັບແຕ່ປະເທດຊາດເຮົາໄດ້ຮັບການປົດປ່ອຍ ປີ 1975 ເປັນຕົ້ນມາ, ລັດຖະບານລາວ ກໍ່ໄດ້ຊອກທຸກວິທີທາງໃນການພັດທະນາປະເທດຊາດ ເພື່ອໃຫ້ປະເທດລາວຫລຸດພົ້ນອອກຈາກປະເທດດ້ອຍພັດທະນາ ແລະ ເຮັດໃຫ້ເສດຖະກິດຂອງຊາດຂະຫຍາຍຕົວໄວ, ເພື່ອບັນລຸຈຸດປະສົງດັ່ງກ່າວ ລັດຖະບານໄດ້ກຳນົດຍຸດທະສາດຖືເອົາການຄ້າເປັນຕ່ອງໂສ້, ການຄົມມະນາຄົມເປັນປາຍແຫລມ ແລະ ການສຶກສາໄປກ່ອນວຽກງານອື່ນກ້າວໜຶ່ງ. ໃນການປະຕິບັດຍຸດທະສາດ ເອົາການສຶກສາໄປກ່ອນ ວຽກງານອື່ນກ້າວໜຶ່ງນັ້ນ ລັດຖະບານກໍ່ໄດ້ສົ່ງນັກສຶກສາ ແລະ ພະນັກງານຫລັກແຫລ່ງ ຈຳນວນຫລວງຫລາຍໄປສຶກສາໃນໄລຍະຍາວ ແລະ ໄລຍະສັ້ນທັງຢູ່ພາຍໃນ ແລະ ຕ່າງປະເທດ. ເຊັ່ນສົ່ງໄປຮຽນຢູ່ໃນອະດີດສະຫະພາບໂຊຫວຽດ, ສປຢ, ສສ ເຊັກໂກ, ຫວຽດນາມ ແລະ ປະເທດ ອື່ນໆອີກ. ໄປຄຽງຄູ່ກັບການກໍ່ສ້າງຢູ່ຕ່າງປະເທດ, ຢູ່ພາຍໃນປະເທດກໍ່ໄດ້ມີການກໍ່ສ້າງທັງໄລຍະສັ້ນ ແລະ ໄລຍະຍາວເຊັ່ນກັນ ຮອດ ປີ 1995 ພວກເຮົາມີສະຖາບັນການສຶກສາຊັ້ນສູງ 10 ສະຖາບັນ ແລະ ມີໂຮງຮຽນຊັ້ນຕົ້ນ ແລະ ຊັ້ນກາງຈຳນວນໜຶ່ງ.

ນັບແຕ່ ປີ 1988 ເຖິງປັດຈຸບັນ ລັດຖະບານລາວໄດ້ປ່ຽນກົນໄກ ການຄຸ້ມຄອງເສດຖະກິດແບບລວມສູນມາ ນຳໃຊ້ກົນໄກເສດຖະກິດຕະຫລາດ, ໃນໄລຍະນີ້ໄດ້ເຮັດໃຫ້ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງຂອງປະເທດເຮົາໄດ້ຮັບການສ້າງຕັ້ງຂຶ້ນ ແລະ ຂະຫຍາຍຕົວ ຊຶ່ງມີຈຳນວນເຖິງ 146,000 ຫົວໜ່ວຍທຸລະກິດ ແລະ ມີການຈ້າງງານເຖິງ 259,000ຄົນ, ຊຶ່ງກວມເອົາ 12% ຂອງກຳລັງແຮງງານທັງໝົດ ຫລືເທົ່າກັບ 43% ຂອງແຮງງານ ທີ່ບໍ່ແມ່ນແຮງງານຂະແໜງກະສິກຳ. ການຈະເລີນເຕີບໂຕຂອງທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ໄດ້ຮຽກຮ້ອງໃຫ້ຜູ້ປະກອບການຕ້ອງມີຄວາມຮູ້ຄວາມສາມາດ ທາງດ້ານການບໍລິຫານທຸລະກິດ, ດັ່ງນັ້ນ ລັດຖະບານຈຶ່ງໄດ້ໃຊ້ຄວາມພະຍາຍາມຊອກຫາແຫລ່ງທຶນ ແລະ ຜູ້ຊ່ຽວຊານຈາກພາຍນອກມາອົບຮົມໃຫ້ແກ່ເຂົາເຈົ້າ ໂດຍຜ່ານຄວາມພະຍາຍາມດັ່ງກ່າວ ມີຫລາຍປະເທດ ແລະ ອົງການຈັດຕັ້ງສາກົນໄດ້ສະໜັບສະໜູນ ແລະ ໃຫ້ທຶນຊ່ວຍເຫລືອ ເພື່ອຝຶກອົບຮົມພະນັກງານເຊັ່ນ: ອົງການ ໄຈກາ ແຫ່ງປະເທດ ຍີ່ປຸ່ນ, ທະນາຄານໂລກ, ທະນາຄານ ADB, ສະວິເດັ່ນ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ຂອງປະເທດຕ່າງໆຫລາຍປະເທດໃນໂລກ. ແຕ່ຂະບວນການຝຶກອົບຮົມໄດ້ຈັດຂຶ້ນຕາມຈຸດປະສົງຂອງ ຜູ້ຈັດການຝຶກອົບຮົມ ແລະ ຍັງບໍ່ໄດ້ຈັດການປະເມີນຜົນ ເຖິງຄວາມເໝາະສົມຂອງເນື້ອໃນ ແລະ ຫລັກສູດຂອງການຝຶກອົບຮົມ. ຫລັງຈາກທີ່ໄດ້ທີ່ໄດ້ນຳເອົາຄວາມຮູ້ດັ່ງກ່າວມາປະຕິບັດຕົວຈິງ. ດັ່ງນັ້ນ ຄະນະເສດຖະສາດ ແລະການຄຸ້ມຄອງ ໂດຍສະເພາະພາກວິຊາຄຸ້ມຄອງ ຈຶ່ງມີຈຸດປະສົງຄົ້ນຄວ້າການກໍ່ສ້າງ ພະນັກງານດັ່ງນີ້:

---

* ຫົວໜ້າພາກວິຊາຄຸ້ມຄອງ, ຄະນະເສດຖະສາດ ແລະ ການຄຸ້ມຄອງ.

**ຈຸດປະສົງໃນການຄົ້ນຄວ້າວິໄຈດັ່ງນີ້.**

ກ). ການຝຶກອົບຮົມມີຄວາມສຳຄັນ ແລະ ມີຜົນກະທົບແນວໃດຕໍ່ການ ພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ.

ຂ). ຂະແໜງວິຊາ ທີ່ທຸລະກິດຕ້ອງການຝຶກອົບຮົມ.

ຄ). ປະສິດທິພາບ ແລະປະສິດທິຜົນຂອງ ການບໍລິຫານການຝຶກອົບຮົມມີຄືແນວໃດ.

**ຜົນທີ່ຄາດວ່າຈະໄດ້ຮັບຈາກການຝຶກອົບຮົມ**

ກ. ຮັບຮູ້ຄວາມຕ້ອງການຝຶກອົບຮົມຂອງທຸລະກິດ.

ຂ. ຮູ້ປະສິດທິພາບ ແລະ ປະສິດທິຜົນຂອງການບໍລິຫານການຝຶກອົບຮົມ.

ຄ. ເປັນຂໍ້ມູນໃຫ້ແກ່ການວາງແຜນ ໃນການຝຶກອົບຮົມໃນອະນາຄົດ.

**ຂອບເຂດຂອງການສຶກສາ.**

ການວິໄຈຄັ້ງນີ້ ພວກເຮົາໄດ້ສຶກສາພຽງແຕ່ຜູ້ທີ່ເຂົ້າຮ່ວມການຝຶກອົບຮົມພາຍໃນ ກຳແພງນະຄອນວຽງຈັນ, ຊຶ່ງລວມມີທັງພາກລັດ ແລະ ເອກະຊົນຈຳນວນໜຶ່ງ.

## ພາກທີ 2

**II. ວິທີການສຶກສາ**

ວິທີການສຶກສາຄົ້ນຄ້ວາ ໄດ້ມີການກະກຽມໃນເບື້ອງຕົ້ນເຊັ່ນ ໃນການອອກແບບເກັບກຳຂໍ້ມູນ, ວິທີການລວບລວມ ແລະວິເຄາະຂໍ້ມູນ. ໃນການວິໄຈຄັ້ງນີ້ໄດ້ໃຊ້ວິທີແບບຟອມສອບຖາມ ແລະ ວິທີສຳພາດບັນດາ ຜູ້ຮັບຜິດຊອບລະດັບສູງ ແລະ ກາງຂອງວິສະຫະກິດຕ່າງໆ ໃນເຂດກຳແພງນະຄອນວຽງຈັນຈຳນວນ 175 ທ່ານ.

**ວິທີການເກັບກຳຂໍ້ມູນແມ່ນໄດ້ແບ່ງອອກເປັນໜ້າວຽກດັ່ງຕໍ່ໄປນີ້:**

**(1) ຂໍ້ມູນຂັ້ນຕົ້ນ (Primary data)**

ການເກັບກຳຂໍ້ມູນຕົວຈິງໃນພາກສະໜາມ:

ຮູບແບບດັ່ງກ່າວແມ່ນ ໄດ້ເກັບກຳຂໍ້ມູນຕົວຈິງກ່ຽວກັບການຝຶກອົບຮົບ, ການຍົກລະດັບຄວາມຮູ້ຄວາມສາມາດ ທາງດ້ານການຄຸ້ມຄອງໃນໄລຍະຜ່ານມາ ຂອງບຸກຄະລະກອນ ພາຍໃນວິສະຫະກິດໃນເຂດກຳແພງນະຄອນວຽງຈັນ. ໃນນັ້ນໄດ້ແບ່ງອອກເປັນສອງໜ້າວຽກດັ່ງນີ້:

- ສຳພາດບັນດາຜູ້ຮັບຜິດຊອບ ລະດັບສູງ ແລະ ກາງ ຂອງວິສະຫະກິດຕ່າງໆ ໃນເຂດ ກຳແພງນະຄອນວຽງຈັນກ່ຽວກັບການຝຶກອົບຮົບ, ການຍົກລະດັບຄວາມຮູ້ຄວາມສາມາດ ທາງດ້ານການຄຸ້ມຄອງໃນໄລຍະຜ່ານມາຂອງບຸກຄະລະກອນພາຍໃນວິສະຫະກິດ ໂດຍການນຳໃຊ້ແບບສອບຖາມ ແລະ ສຳພາດໃນລັກສະນະເຄິ່ງໂຄງສ້າງໃນແນວຄຸນນະພາບ (Semi structured method).

- ສຳພາດບັນດານັກສຳມະນາກອນ ທີ່ໄດ້ເຂົ້າຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ ຄວາມສາມາດ ທາງດ້ານການຄຸ້ມຄອງ ໃນໄລຍະຜ່ານມາ ເພື່ອປະເມີນຜົນດ້ານປະສິດທິພາບ ແລະ ປະສິດທິຜົນຂອງການຝຶກອົບທີ່ອົງການຈັດຕັ້ງສາກົນໄດ້ຈັດຂຶ້ນໃນໄລຍະຜ່ານມາ. ການສຳພາດດັ່ງກ່າວໄດ້ໃຊ້ແບບສອບຖາມ ແລະ ສຳພາດໃນລັກສະນະເຄິ່ງໂຄງສ້າງໃນເຊີງຄຸນນະພາບ.

**(2) ຂໍ້ມູນຂັ້ນສອງ (Secondary data)**

ຂໍ້ມູນຂັ້ນສອງໄດ້ທ້ອນໂຮມມາຈາກພາກລັດ ແລະອົງການຈັດຕັ້ງສາກົນ ທີ່ເຄີຍຈັດການຝຶກອົບຮົມ ແລະ ສຳມະນາກ່ຽວກັບຄວາມຮູ້ຄວາມສາມາດ ທາງດ້ານການຄຸ້ມຄອງໃນ ສປປ ລາວ ໃນໄລຍະຜ່ານມາເຊັ່ນ: ກະຊວງການຄ້າ, ກະຊວງ ອຸດສາຫະກຳ ແລະຫັດຖະກຳ, ອົງການ JICA, GTZ, IMF, ອົງການ ພັດທະນາລຸ່ມແມ່ນ້ຳຂອງ ແລະອື່ນໆ. ນອກຈາກນີ້ແລ້ວ, ບົດວິໃຈ, ກໍລະນີສຶກສາ ແລະ ຂໍ້ມູນຕ່າງໆ ກ່ຽວກັບການຝຶກອົບຮົມ ແລະ ສຳມະນາ, ການຍົກລະດັບຄວາມຮູ້ຄວາມສາມາດ ທາງດ້ານການຄຸ້ມຄອງຂອງ ວິສະຫະກິດໃນຕ່າງປະເທດໄດ້ຖືກນຳໃຊ້ເຂົ້າໃນການວິໃຈຄັ້ງນີ້.

**(3) ການວິເຄາະຂໍ້ມູນ.**

ຫຼັງຈາກທີ່ໄດ້ເກັບ ແລະ ລວບລວມຂໍ້ມູນຂັ້ນຕົ້ນ ແລະ ຂັ້ນທີ່ສອງແລ້ວໄດ້ມີການວິເຄາະຂໍ້ມູນດັ່ງນີ້: ຂໍ້ມູນດ້ານປະລິມານໄດ້ຈັດສັນເຂົ້າໃນໂປແກຣມ SPSS ເພື່ອຈັດລຽງເປັນລະບົບ ແລະ ສ້າງຄວາມສຳພັນຂອງຕົວປ່ຽນຕ່າງໆ.

ຂໍ້ມູນດ້ານຄຸນນະພາບ (ຂໍ້ມູນທີ່ບໍ່ເປັນຕົວເລກ) ໄດ້ຖືກທ້ອນໂຮມ, ຂັດຈ້ອນ ແລະ ລຽງລຳດັບຄວາມສຳຄັນຕາມຄວາມເປັນຈິງ. ໃນການວິເຄາະຂໍ້ມູນໄດ້ມີການປຽບທຽບຂໍ້ມູນທີ່ເປັນຕົວເລກ ແລະ ຂໍ້ມູນຄຸນນະພາບຢ່າງລະມັດລະວັງ ເພື່ອຮັບປະກັນຄວາມຊັດເຈນ ແລະ ຫຼີກລ້ຽງຄວາມອຳອ່ຽງຕ່າງໆ ທີ່ອາດຈະເກີດຂຶ້ນ.

**(4) ການລາຍງານຜົນການວິໃຈ**

ການລາຍງານຜົນການວິໃຈກ່ຽວກັບການປະເມີນຜົນ ການຝຶກອົບຮົມການຄຸ້ມຄອງວິສະຫະກິດຂະໜາດກາງ ແລະ ນ້ອຍໃນຄັ້ງນີ້ໄດ້ແບ່ງອອກເປັນ 4 ພາກຄື:

1. ພາກສະເໜີເຊິ່ງໄດ້ອະທິບາຍເຖິງ ເຫດຜົນຂອງການວິໃຈ, ບັນຫາ, ຈຸດປະສົງ.
2. ພາກທີ ສອງ ສະເໜີວິທີທີ່ໃຊ້ໃນການວິໃຈ, ຂອບເຂດ ແລະ ການລາຍງານຜົນການວິໃຈ.
3. ພາກວິເຄາະຂໍ້ມູນ, ໃນພາກນີ້ບັນດາຂໍ້ມູນຕ່າງໆ ຈະໄດ້ຖືກຈັດເປັນລະບົບ, ປະເມີນຜົນ ແລະ ຕີຄວາມໝາຍ ຈຸດດີ, ຈຸດອ່ອນ ແລະ ສາຍເຫດຂອງແຕ່ລະປະເດັນ.
4. ພາກສະຫຼຸບ, ໃນພາກນີ້ ຈະໄດ້ສະຫຼຸບຜົນໄດ້ຮັບຂອງ ການວິໃຈໃນຄັ້ງນີ້ ແລະ ແນະນຳແນວທາງໃນການຈັດສຳມະນາ ແລະ ການຝຶກອົບຮົມກ່ຽວກັບ ການຄຸ້ມຄອງໃນອະນາຄົດ ເພື່ອໃຫ້ແທດເໝາະກັບສະພາບຄວາມເປັນຈິງ ແລະ ຄວາມຕ້ອງການຂອງບັນດາວິສະຫະກິດຕ່າງໆ.

## ພາກທີ 3

**III . ຜົນຂອງການວິໃຈ**

- ***ພາກທົ່ວໄປ***

ການເກັບກຳຂໍ້ມູນຄັ້ງນີ້ ກວມເອົາຫຼາຍຂົງເຂດອຸດສາຫະກຳ ເຊິ່ງລວມມີຂະແໜງກະສິກຳ, ປຸງແຕ່ງ, ຕັດຫຍິບ, ການທະນາຄານ, ປະກັນໄພ, ຫັດຖະກຳ, ການທ່ອງທ່ຽວ, ລ້ຽງສັດ, ປູກຝັງ, ກໍ່ສ້າງ, ການຄ້າ ແລະອື່ນໆ. ໃນນັ້ນກຸ່ມຕົວຢ່າງສ່ວນໃຫຍ່ແລ້ວມາຈາກການຄ້າ ເຊິ່ງກວມເອົາ 19% ຂອງຈຳນວນທັງໝົດ, ກໍ່ສ້າງ 8%, ປຸງ

ແຕ່ງ 4% ແລະ ຕັດຫຍິບ 4%. ກຸ່ມວິໄຈສ່ວນໃຫຍ່ແລ້ວ ຈັດກຸ່ມອຸດສາຫະກຳຂອງຕົນເອງນອກເໜືອຈາກສິ່ງທີ່ກ່າວມາຂ້າງເທິງນັ້ນ, ໃນນີ້ມີ 36% ບໍ່ໄດ້ບອກອຸດສາຫະກຳທີ່ຕົນເອງນອນຢູ່ ແລະ 20% ບໍ່ໄດ້ລະບຸໄວ້ໃນແບບສອບຖາມ.

ກຸ່ມຕົວຢ່າງໄດ້ມາຈາກຫຼາຍພາກສ່ວນທຸລະກິດ ທີ່ມີການແຈກຢາຍເກືອບເວົ້າໄດ້ວ່າສະເໝີກັນ. ໃນນີ້ມາຈາກພາກສ່ວນບໍລິສັດເອກະຊົນມີເຖິງ 26,1%, ພາກສ່ວນລັດວິສະຫະກິດ 14%, ພາກສ່ວນບໍລິສັດຕ່າງປະເທດ 14%, ພາກສ່ວນຫຸ້ນສ່ວນກັບຕ່າງປະເທດ 11,5% ແລະ ຈາກພາກສ່ວນບໍລິສັດຈຳກັດຜູ້ດຽວ 11.5%. ສ່ວນເຫຼືອຈຳນວນ 22.9% ນັ້ນບໍ່ໄດ້ລະບຸປະເພດບໍລິສັດຂອງຕົນເອງ.

- ***ຜົນການວິໄຈດ້ານການຝຶກອົບຮົມໃນໄລຍະຜ່ານມາ***

ບັນດາກຸ່ມຕົວຢ່າງ ໄດ້ເຂົ້າຮ່ວມການສຳມະນາ ທີ່ຈັດຂຶ້ນໂດຍ ອົງກອນຕ່າງໆ ສ່ວນຫລາຍແມ່ນ ຈັດຂຶ້ນໂດຍກະຊວງການຄ້າ 14,6% ແລະ ສູນຮ່ວມມື ລາວ-ຍີ່ປຸ່ນ 14%, ຈັດຂຶ້ນໂດຍກະຊວງອຸດສາຫະກຳ ແລະຫັດຖະກຳ 11,5%, ອົງການໄຈກາ 11,5%, ຈີທີແຊດ 7,6% ແລະຢູເອັນດີພີ 7.5% ຜູ້ເຂົ້າຮ່ວມການ ຝຶກອົບຮົມ ທີ່ຈັດຂຶ້ນ ໂດຍອົງການ ESCAP, IMF, ໂຮງຮຽນເອກະພາບ, ທະນາຄານໂລກ, ວິທະຍາໄລລາວ-ອາເມລິກາ, ຄອນເຊັນ ເຕີ, ອົງການພັດທະນາລຸ່ມແມ່ນ້ຳຂອງ, ແລະ AOTS ມີເປີເຊັນຕ່ຳກວ່າ 5% ໃນແຕ່ລະອົງກອນ.

- ***ລະດັບຄວາມພໍໃຈຕໍ່ໂຄງການຝຶກອົບຮົມ***

**ໃນການວິໄຈນັ້ນໄດ້ຈັດເປັນ 4 ລະດັບຄື:** ພໍໃຈຫຼາຍທີ່ສຸດ, ພໍໃຈ ປານກາງ, ແລະ ພໍໃຈໜ້ອຍ. ຜູ້ທີ່ເຂົ້າຮ່ວມການຝຶກອົບຮົມສ່ວນໃຫຍ່ມີຄວາມພໍໃຈຫຼາຍທີ່ສຸດ ຕໍ່ໂຄງການຝຶກອົບ ຮົມທີ່ຕົນເອງໄດ້ເຂົ້າຮ່ວມ ເຊິ່ງກວມເອົາ 42,7% ຂອງຈຳນວນທັງໝົດ ແລະ ຜູ້ທີ່ເຂົ້າຮ່ວມທີ່ມີຄວາມພໍໃຈລະດັບ ປານກາງມີຈຳນວນ 19,1%, ພໍໃຈໜ້ອຍ 0.6%, ພໍໃຈໜ້ອຍທີ່ສຸດ 3.8% ແລະ ຈຳນວນ 33,8% ບໍ່ສະແດງຄວາມ ຄິດເຫັນດ້ານນີ້.

- ***ເຫດຜົນຂອງຜູ້ທີ່ບໍ່ເຂົ້າຮ່ວມ ໃນການຝຶກອົບຮົມ***

ການວິໄຈຍັງໄດ້ວິເຄາະເຖິງເຫດຜົນຜູ້ທີ່ບໍ່ເຂົ້າຮ່ວມການຝຶກອົບຮົມ, ຜົນຂອງການວິໄຈໄດ້ຊີ້ໃຫ້ເຫັນວ່າ ຜູ້ບໍ່ເຂົ້າຮ່ວມໃນການຝຶກອົບຮົມສ່ວນໃຫຍ່ແລ້ວແມ່ນ ບໍ່ມີຂໍ້ມູນກ່ຽວກັບການຝຶກອົບຮົມ 14%, ບໍ່ມີເວລາ 10,2%, ບໍ່ມີຫົວຂໍ້ເໝາະສົມ 5,1% ບໍ່ມີງົບປະມານ 5,1%, ອື່ນໆ 2,5%, ມີຄວາມຮູ້ພຽງພໍແລ້ວ 1,9% ແລະ ຈຳນວນ 60,5% ບໍ່ມີຄຳເຫັນຕໍ່ເຫດຜົນໃນການ ບໍ່ໄດ້ເຂົ້າຮ່ວມການຝຶກອົບຮົມ.

- ***ການສຶກສາຄວາມພໍໃຈຕໍ່ໂຄງການຝຶກອົບຮົມ***

ບັນດາຜູ້ເຂົ້າຮ່ວມສຳມະນາສ່ວນຫຼາຍແມ່ນ ການສຳມະນາທີ່ຈັດຂຶ້ນໂດຍກະຊວງການຄ້າ ແລະ ສູນຮ່ວມມືລາວ-ຍີ່ປຸ່ນ, ເຊິ່ງແຕ່ລະອົງກອນມີຜູ້ເຂົ້າຮ່ວມເຖິງ 14% ຂອງຈຳນວນກຸ່ມຕົວຢ່າງທັງໝົດ. ໃນນັ້ນຜູ້ເຂົ້າຮ່ວມການສຳມະນາ ທີ່ມີຄວາມພໍໃຈສູງສຸດຈາກການສຳມະນາຈັດຂຶ້ນ ໂດຍກະຊວງການຄ້າມີເຖິງ 68,2%, ພໍໃຈປານກາງ 27,3%, ແລະ ພໍໃຈໜ້ອຍມີ 4.5%. ຜູ້ທີ່ເຂົ້າຮ່ວມການຝຶກອົບຮົມ ທີ່ຈັດຂຶ້ນໂດຍສູນຮ່ວມມືລາວ-ຍີ່ປຸ່ນມີຄວາມພໍໃຈສູງສຸດ 63.6%, ແລະ ພໍໃຈປານກາງ 36.4%, ແລະ ບໍ່ມີການສະແດງຄວາມພໍໃຈໜ້ອຍ. ຖ້າສົມທຽບ ລະດັບຄວາມພໍໃຈຂອງການເຂົ້າຮ່ວມການຝຶກອົບຮົມທີ່ຈັດຂຶ້ນໂດຍ ອົງການໄຈກາ ແລະ ກະຊວງ ອຸດສາຫະກຳ ແລະ ຫັດຖະກຳ ທີ່ມີຈຳນວນຜູ້ເຂົ້າຮ່ວມສຳມະນາເທົ່າກັນ 10,2% ແລ້ວເຫັນວ່າລະດັບຄວາມພໍໃຈມີລະດັບແຕກ ຕ່າງກັນເຊັ່ນດຽວກັນ. ສຳລັບພາກສ່ວນກະຊວງອຸດສາຫະກຳ ແລະ ຫັດຖະກຳມີລະດັບຄວາມພໍໃຈສູງສຸດ 75% ແລະ ພໍໃຈປານກາງ 25%, ແຕ່ສະເພາະພາກສ່ວນ ໄຈກາ ມີລະດັບຄວາມພໍໃຈສູງສຸດ 50% ແລະ ພໍໃຈປານກາງ 50%. ທັງສອງອົງກອນນີ້ບໍ່ມີຜູ້ສະແດງຄວາມພໍໃຈໜ້ອຍ. ສັງເກດພາກສ່ວນ GTZ, ມີຜູ້ເຂົ້າຮ່ວມ

ສໍາມະນາ 7% ຂອງຜູ້ເຂົ້າຮ່ວມທັງໝົດ ແລະ ມີຄວາມເພິ່ງພໍໃຈບໍ່ແຕກຕ່າງກັນຫຼາຍປານໃດ ເຊັ່ນດຽວກັນກັບຂອງພາກສ່ວນ UNDP ທີ່ມີຜູ້ຄົນເຂົ້າຮ່ວມ 7.5%, ມີລະດັບຄວາມພໍໃຈສູງສຸດຢູ່ 60%, ຄວາມພໍໃຈປານກາງ 30%, ແລະ ຕໍ່າສຸດ 10%. ສໍາລັບພາກສ່ວນອື່ນມີຈໍານວນຜູ້ເຂົ້າຮ່ວມການຝຶກອົບຮົມໜ້ອຍ. ສະນັ້ນ, ຈຶ່ງເປັນການຍາກໃນການຕີຄ່າ ລະດັບຄວາມເພິ່ງພໍໃຈໃຫ້ມີຄວາມຊັດເຈນ. ຕົວຢ່າງເຊັ່ນ: ພາກສ່ວນທະນາຄານໂລກ ແລະ ອົງການພັດທະນາ ລຸ່ມແມ່ນໍ້າຂອງມີຜູ້ເຂົ້າຮ່ວມພຽງແຕ່ 2,5%, ເຊິ່ງທັງໝົດນີ້ມີລະດັບຄວາມພໍໃຈສູງສຸດເຖິງ 100%. ລະດັບຄວາມພໍໃຈນີ້ ບໍ່ສາມາດນໍາໃຊ້ໄດ້ໃນລັກສະນະຂອງການວິໄຈ ຍ້ອນມີຜູ້ເຂົ້າຮ່ວມໜ້ອຍເກີນໄປ.

ຮູບ1. ລະດັບຄວາມພໍໃຈຂອງຜູ້ເຂົ້າຮ່ວມການຝຶກອົບຮົມທີ່ຈັດຂຶ້ນໂດຍແຕ່ລະອົງກອນ




- ***ຄວາມຕ້ອງການດ້ານການຝຶກອົບຮົມ***

ການວິໄຈພົບວ່າ ຄວາມຕ້ອງການດ້ານການຝຶກອົບຮົມຢູ່ໃນລະດັບສູງ ຍ້ອນຫຼາຍສາເຫດ, ເປີເຊັນຜູ້ເຂົ້າຮ່ວມການຝຶກອົບຮົມ ທີ່ຢາກເຂົ້າຮ່ວມການຝຶກອົບຮົມໃນອະນາຄົດມີສູງເຖິງ 97,5%, ເຫດຜົນຕົ້ນຕໍຂອງຄວາມຕ້ອງການເຂົ້າຮ່ວມການຝຶກອົບຮົມນັ້ນແມ່ນ ເພື່ອຮຽນຮູ້ຄວາມຮູ້ໃໝ່ໃນການບໍລິຫານທຸລະກິດ 57% ແລະ ເພື່ອຊອກຫາແນວຄວາມຄິດໃໝ່ດ້ານທຸລະກິດ 34%, ເຫດຜົນອື່ນໆເຊັ່ນ ເພື່ອໃຫ້ມີໝູ່ເພື່ອນຫຼາຍ ແລະ ຕ້ອງການມີອໍານາດຫຼາຍ ບໍ່ສໍາຄັນປານໃດ, ມີພຽງແຕ່ 2% ເທົ່ານັ້ນ.

ການວິໄຈພົບວ່າບັນດາບໍລິສັດເອກະຊົນ ມີຄວາມຕ້ອງການທາງດ້ານການຝຶກອົບຮົມສູງທີ່ສຸດ. ໃນນັ້ນເຂົາເຈົ້າຕ້ອງການການຝຶກອົບຮົມວິຊາການບໍລິຫານຍຸດທະສາດ ແລະ ການບັນຊີເປັນພິເສດໂດຍປະລິມານ 45% ແລະ 40% ຕາມລໍາດັບ. ພາກສ່ວນທີ່ຮອງລົງມາແມ່ນ ບໍລິສັດຂອງລັດ ແລະ ອີກສາມພາກສ່ວນບໍລິສັດສ່ວນຕົວ, ຮ່ວມທຶນກັບຕ່າງປະເທດ, ແລະ ບໍລິສັດຕ່າງປະເທດມີຄວາມຕ້ອງການດ້ານການຝຶກອົບຮົມໜ້ອຍ.

ຖ້າຈະເບິ່ງເປັນລາຍວິຊາແລ້ວ, ໃນຈໍານວນຜູ້ຕອບແບບສອບຖາມທັງໝົດ 157 ຄົນນັ້ນວິຊາທີ່ມີຄວາມຕ້ອງການສູງສຸດແມ່ນ ວິຊາການຕະຫຼາດ, ການວາງແຜນທຸລະກິດ ແລະ ການບໍລິຫານທຸລະກິດທົ່ວໄປ ຄິດເປັນເປີເຊັນແມ່ນ 58%, 48%, ແລະ 56% ຕາມລໍາດັບ. ສາມວິຊາ ທີ່ໄດ້ຮັບຄວາມສົນໃຈໜ້ອຍທີ່ສຸດໄດ້ແກ່ ວິຊາການບໍລິຫານສິ່ງຊ່ວຍໜູນ ຫຼື ສິ່ງອໍານວຍຄວາມສະດວກ, ການເລີ່ມຕົ້ນດໍາເນີນທຸລະກິດ, ແລະ ເສດຖະສາດພື້ນ

ຖານ, ມີຄົນຕ້ອງການການຝຶກອົບຮົມດ້ານນີ້ພຽງແຕ່ 11%, 13%, ແລະ 16% ຕາມລຳດັບເທົ່ານັ້ນ. ສ່ວນຄວາມຕ້ອງການການຝຶກອົບຮົມເປັນລາຍວິຊາ ຂອງແຕ່ລະປະເພດທຸລະກິດນັ້ນ ໄດ້ຕິດຄັດມາໃນເອກະສານຊ້ອນທ້າຍ.

ຮູບ 2. **ຄວາມຕ້ອງການດ້ານການຝຶກອົບຮົມ ໂດຍແຕ່ລະຂະແໜງການ**




## ພາກທີ 4

### IV. ສະຫຼຸບ

ການສຶກສາວິໄຈກ່ຽວກັບ ການປະເມີນຜົນ ການບໍລິຫານການຝຶກອົບຮົມ ເພື່ອພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງໃນຂົງເຂດອຸດສາຫະກຳການຜະລິດ ແລະ ບໍລິການ ໃນຄັ້ງນີ້ລວມທັງໝົດມີ 157 ວິສະຫະກິດໃນທົ່ວເຂດ ກຳແພງນະຄອນວຽງຈັນ.

ດ້ານການຝຶກອົບຮົມກ່ຽວກັບການບໍລິຫານທຸລະກິດໃນໄລຍະຜ່ານມາເຫັນວ່າ ມີຫລາຍອົງກອນຕ່າງປະເທດ ແລະ ອົງກອນຂອງລັດໄດ້ມີການຈັດຝຶກອົບຮົມໄລຍະສັ້ນ ແລະ ໄລຍະຍາວ ໃຫ້ແກ່ບັນດາຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງໃນເຂດ ກຳແພງນະຄອນວຽງຈັນ ປະກົດວ່າ ມີຫລາຍບໍລິສັດ ແລະ ຫລາຍພາກສ່ວນທັງລັດ ແລະ ເອກະຊົນໄດ້ເຂົ້າຮ່ວມການຝຶກອົບຮົມໃນແຕ່ລະຄັ້ງ. ຫລາຍບໍລິສັດແມ່ນ ມີຄວາມສົນໃຈ ແລະ ຄວາມຕ້ອງ ການສູງທີ່ຈະພັດທະນາ ດ້ານບຸກຄະລາກອນກອນຂອງບໍລິສັດ ເຫັນໄດ້ຄວາມສຳຄັນທາງດ້ານວິຊາການ ໃນການ ບໍລິຫານທຸລະກິດເພາະວ່າ ໃນປະຈຸບັນນີ້ ທຸລະກິດຕ່າງໆມີການຈະເລີນເຕີບໂຕ ແລະ ມີການແຂ່ງຂັນກັນຢ່າງຮຸນແຮງຂຶ້ນທຸກວັນ.

ເຫັນໄດ້ວ່າ ບໍລິສັດໂດຍສ່ວນໃຫຍ່ແລ້ວ ການເຂົ້າຮ່ວມການຝຶກອົບຮົມແມ່ນ ເພື່ອປັບປຸງຍົກລະດັບຄວາມຮູ້ດ້ານການບໍລິຫານທຸລະກິດ ແລະ ມີຄວາມຮູ້ທາງດ້ານທຸລະກິດໃໝ່ໆຢູ່ຕະຫລອດເວລາ ເພື່ອໃຫ້ທັນກັບໂລກທີ່ປ່ຽນແປງໄປ. ຜົນການວິໄຈຍັງພົບວ່າ ສາເຫດຫລັກທີ່ເຮັດໃຫ້ຫລາຍບໍລິສັດ ຍັງບໍ່ທັນໄດ້ຮັບການຝຶກອົບຮົມມີຄື: ບໍ່ໄດ້ຮັບຂໍ້ມູນຂ່າວສານຈາກພາກສ່ວນທີ່ກ່ຽວຂ້ອງ, ຂາດງົບປະມານ, ຄິດວ່າພະນັກງານບໍລິສັດມີຄວາມຮູ້ພຽງພໍ, ຫົວຂໍ້ໃນການຝຶກອົບຮົມຍັງບໍ່ທັນແທດເໝາະກັບຄວາມຕ້ອງການຂອງບໍລິສັດ, ບໍ່ມີເວລາ ແລະ ອື່ນໆ ອາດເຫັນໄດ້ວ່າໃນໄລຍະຜ່ານມາການຝຶກອົບຮົມໃນແຕ່ລະຄັ້ງແມ່ນ ຈັດຂຶ້ນອີງຕາມຄວາມຄິດເຫັນຂອງນັກວິຊາການທັງພາຍໃນ ແລະ ຕ່າງປະເທດຍັງບໍ່ທັນໄດ້ມີການສຳຫລວດວິໄຈຄວາມຕ້ອງການ ໃນການຝຶກອົບຮົມຂອງບັນດາຫົວໜ່ວຍທຸລະກິດ.

ດັ່ງນັ້ນ, ການຝຶກອົບຮົມບາງຫົວຂໍ້ຍັງເຫັນວ່າ ບໍ່ທັນແທດເໝາະກັບຄວາມຕ້ອງການ ແລະສະພາບຕົວຈິງໃນການດຳເນີນທຸລະກິດໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ນອກຈາກນັ້ນ ໜ່ວຍງານທີ່ຮັບຜິດຊອບໃນການຈັດຝຶກອົບຮົມ ຍັງຂາດການປະຊາສຳພັນ, ການແຈ້ງຂໍ້ມູນຂ່າວສານ ໃຫ້ບັນດາຫົວໜ່ວຍທຸລະກິດ ແລະ ໃຫ້ຂໍ້ມູນຊັກຊ້າ ເຮັດໃຫ້ຫລາຍບໍລິສັດບໍ່ສາມາດເຂົ້າຮ່ວມໃນ ການຝຶກອົບຮົມໄດ້ຕາມຄວາມຕ້ອງການ ໃນການຝຶກອົບຮົມຂອງບັນດາຫົວໜ່ວຍທຸລະກິດສະແດງໃຫ້ເຫັນວ່າ ທຸກໆບໍລິສັດແມ່ນ ມີຄວາມຕ້ອງການ ຢູ່ໃນລະດັບສູງຖ້າຄິດເປັນລາຍວິຊາແລ້ວ, ວິຊາທີ່ມີຄວາມຕ້ອງການສູງສຸດແມ່ນ ວິຊາການຕະຫລາດ, ການວາງແຜນການຜະລິດ, ການບໍລິຫານທຸລະກິດທົ່ວໄປ ແລະການບໍລິຫານການເງິນ ຕາມລຳດັບເຫັນວ່າ ຍັງມີຫລາຍບໍລິສັດຍັງຂາດນັກວິຊາການທາງດ້ານນີ້ ແລະຄວາມຮູ້ພື້ນຖານທາງດ້ານທຸລະກິດ.

ສຳຫລັບຄວາມຄິດເຫັນຂໍ້ສະເໜີຈາກຜົນການວິໄຈພົບວ່າ ໂດຍສ່ວນຫລາຍແລ້ວແມ່ນ ໄດ້ສຶກສາໃນຂະແໜງການຄ້າກວມເຖິງ 19.1%; ດັ່ງນັ້ນ ໃນການວິໄຈໃນຄັ້ງຕໍ່ໄປ ຄວນອອກແບບເຄື່ອງມືການວິໄຈ ໃຫ້ກວມລວມທຸກຂະແໜງການ ໃນຂົງເຂດອຸດສາຫະກຳການຜະລິດ ແລະ ບໍລິການ. ໃນໄລຍະຜ່ານມາການຝຶກອົບຮົມຍັງພົບວ່າຫລາຍອົງກອນ ແລະ ໜ່ວຍງານ ຍັງຂາດການປະຊາສຳພັນທີ່ດີ ເຮັດໃຫ້ຫລາຍບໍລິສັດ ຂາດໂອກາດໃນການຮຽນຮູ້ສິ່ງໃໝ່ໆໃນການບໍລິຫານທຸລະກິດ. ແລະນອກຈາກນັ້ນ ການຈັດຝຶກອົບຮົມຍັງບໍ່ທັນແທດເໝາະກັບສະພາບຄວາມຕ້ອງການຂອງບໍລິສັດທີ່ແທ້ຈິງເທື່ອ. ດັ່ງນັ້ນ, ໃນຂັ້ນຕໍ່ໄປ ຄວນມີການປະສານສົມທົບປະຊາສຳພັນ ໃຫ້ຂໍ້ມູນແກ່ ບໍລິສັດມີຖານຂໍ້ມູນກ່ຽວກັບ ບໍລິສັດ ແລະ ມີການສຶກສາຄວາມຕ້ອງການ ໃນການຝຶກອົບຮົມ ຢ່າງເປັນລະບົບ ເພື່ອຈະໄດ້ຈັດຫົວຂໍ້ໃນການຝຶກອົບຮົມ ໃຫ້ແທດເໝາະກັບຄວາມຕ້ອງການຂອງທຸລະກິດ.

## ເອກະສານຊ້ອນທ້າຍ
## ຄວາມຕ້ອງການດ້ານການຝຶກອົບຮົມໂດຍແຕ່ລະຂະແໜງການທຸລະກິດ

| | ລັດວິສາຫະກິດ | ເອກະຊົນ | ບຸກຄົນ ຫຼື ຄອບຄົວ | ຮ່ວມທຶນກັບ ຕ່າງ ປະເທດ | ຕ່າງປະເທດ |
|---|---|---|---|---|---|
| ການບໍລິຫານທຸລະກິດທົ່ວໄປ | 29.7% | 32.8% | 10.9% | 7.8% | 18.8% |
| ການບໍລິຫານຍຸດທະສາດ | 21.4% | 46.4% | 10.7% | 10.7% | 10.7% |
| ການບໍລິຫານການຜະລິດ | 5.7% | 34.3% | 22.9% | 14.3% | 22.9% |
| ການຕະຫຼາດ | 18.9% | 33.8% | 16.2% | 14.9% | 16.2% |
| ການເງິນ/ການບໍລິຫານການເງິນ | 22.9% | 35.4% | 16.7% | 16.7% | 8.3% |
| ການວາງແຜນທຸລະກິດ | 24.6% | 37.7% | 13.1% | 9.8% | 14.8% |
| ທັກສະທາງຄອມພິວເຕີ | 16.7% | 33.3% | 13.3% | 23.3% | 13.3% |
| ການບັນຊີ | 17.1% | 42.9% | 11.4% | 11.4% | 17.1% |
| ການຄ້າສາກົນ | 26.7% | 23.3% | 16.7% | 10.0% | 23.3% |
| ການບໍລິຫານສິ່ງຊ່ວຍໜູນ ແລະ ສິ່ງອຳນວຍຄວາມສະດວກ | 23.5% | 23.5% | 29.4% | 17.6% | 5.9% |
| ການເລີ່ມຕົ້ນດຳເນີນທຸລະກິດ | 11.8% | 35.3% | 11.8% | 17.6% | 23.5% |
| ການຂະຫຍາຍທຸລະກິດ | 16.7% | 36.1% | 19.4% | 13.9% | 13.9% |
| ເສດຖະສາດພື້ນຖານ | 23.5% | 23.5% | 17.6% | 23.5% | 11.8% |
| ທຸລະກິດຄອບຄົວ/ການບໍລິຫານທຸລະກິດຂະໜາດນ້ອຍ | 22.6% | 32.3% | 16.1% | 12.9% | 16.1% |
| ການວາງແຜນການຜະລິດ | 20.8% | 20.8% | 16.7% | 20.8% | 20.8% |